**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ ເລກທີ 402 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 31 ພຶດສະພາ 2022

# ຂໍ້ຕົກລົງ
# ວ່າດ້ວຍການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ຂັ້ນຕອນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ເພື່ອເຮັດໃຫ້ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ດຳເນີນຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ແນໃສ່ປົກປ້ອງຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ແລະ ເຈົ້າໜີ້ ປະກອບສ່ວນໃນການຮັກສາຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ ແລະ ເສດຖະກິດ-ສັງຄົມ.

### ມາດຕາ 2 ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ

ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແມ່ນຂະບວນການທີ່ປະຕິບັດໂດຍທະນາຄານແຫ່ງ ສປປ ລາວ ໂດຍນຳໃຊ້ບັນດາເຄື່ອງມື ຫຼື ມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ເພື່ອແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;

2. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ;

3. **ສະຖາບັນການເງິນໃນກຸ່ມ** ໝາຍເຖິງ ສະຖາບັນການເງິນ ຊຶ່ງທະນາຄານທຸລະກິດ ຫຼື ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຖືຮຸ້ນທີ່ສາມາດລົງຄະແນນສຽງໄດ້ ແຕ່ ຫ້າສິບສ່ວນຮ້ອຍຂຶ້ນໄປ;

4. **ສະຖາບັນການເງິນທີ່ຢູ່ໃນພາວະວິກິດ** ໝາຍເຖິງ ສະຖາບັນການເງິນທີ່ມີຖານະການເງິນອ່ອນແອຢ່າງຮ້າຍແຮງ ແລະ ຂາດຄວາມໝັ້ນຄົງ ຫຼື ສະພາບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

5. **ສະຖາບັນການເງິນຂົວຕໍ່** ໝາຍເຖິງ ສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຊຶ່ງທະນາຄານແຫ່ງ ສປປ ລາວ ໄດ້ລົງທຶນເພື່ອແກ້ໄຂສະພາວະວິກິດ ແລະ ກາຍເປັນເຈົ້າກຳມະສິດຂອງສະຖາບັນການເງິນດັ່ງກ່າວ ເພື່ອນຳໄປບໍລິຫານຕໍ່ ຈົນກວ່າຈະມີການຄວບກັບສະຖາບັນການເງິນອື່ນ ຫຼື ຂາຍຮຸ້ນຂອງສະຖາບັນການເງິນດັ່ງກ່າວ ໃຫ້ຜູ້ລົງທຶນໃໝ່;

6. **ຄະນະຄວບຄຸມ** ໝາຍເຖິງ ຄະນະກຳມະການ ທີ່ຖືກແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ ເພື່ອເຂົ້າຄວບຄຸມສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;

7. **ຄ່າຕອບແທນ** ໝາຍເຖິງ ເງິນເດືອນ ຫຼື ຄ່າແຮງງານ, ເງິນໂບນັດ ແລະ ເງິນນະໂຍບາຍຕ່າງໆ;

8. **ເຈົ້າໜີ້ຕ້ອງສິ່ງສຳຮອງ** ໝາຍເຖິງ ເຈົ້າໜີ້ທີ່ໄດ້ໃຫ້ກູ້ຢືມແກ່ສະຖາບັນການເງິນ ຊຶ່ງເປັນເງິນກູ້ທີ່ບໍ່ມີການຄ້ຳປະກັນ ເມື່ອສະຖາບັນການເງິນຫາກຖືກຍຸບເລີກ ຫຼື ລົ້ມລະລາຍ ຈະມີບຸລິມະສິດໄດ້ຮັບຊຳລະຄືນ ຕາມຫຼັງເຈົ້າໜີ້ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທົ່ວໄປ ຫຼື ຢູ່ໃນລຳດັບບຸລິມະສິດ "ໃຊ້ແທນໜີ້ສິນທີ່ບໍ່ມີການຄ້ຳປະກັນ" ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ;

9. **ຄະນະຊຳລະສະສາງ** ໝາຍເຖິງ ຄະນະກຳມະການ ທີ່ຖືກແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ ເພື່ອເຮັດໜ້າທີ່ຊຳລະສະສາງຊັບສິນຂອງສະຖາບັນການເງິນ ຊຶ່ງປະກອບມີພະນັກງານຈາກທະນາຄານແຫ່ງ ສປປ ລາວ, ສຳນັກງານປົກປ້ອງເງິນຝາກ ແລະ ຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງ;

10. **ຜູ້ຊຳລະສະສາງ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນພາຍນອກ ທີ່ເປັນຜູ້ຊ່ຽວຊານໃນການຊຳລະສະສາງທີ່ໄດ້ຮັບການຢັ້ງຢືນເປັນຜູ້ຊຳລະສະສາງ ຈາກພາກສ່ວນທີ່ກ່ຽວຂ້ອງ, ໄດ້ຮັບການວ່າຈ້າງ ແລະ ແຕ່ງຕັ້ງໂດຍທະນາຄານແຫ່ງ ສປປ ລາວ ເພື່ອເຮັດໜ້າທີ່ຊຳລະສະສາງຊັບສິນຂອງສະຖາບັນການເງິນ.

**ມາດຕາ 4 ຫຼັກການໃນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ;

2. ຮັບປະກັນຄວາມຖືກຕ້ອງ, ພາວະວິໄສ, ເປັນທຳ ແລະ ທັນເວລາ;
3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຝາກເງິນ ແລະ ເຈົ້າໜີ້ຂອງສະຖາບັນການເງິນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບສະຖາບັນການເງິນ, ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານຂອງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ.

## ໝວດທີ 2
## ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ

**ມາດຕາ 6 ຜູ້ຮັບຜິດຊອບແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 7 ຈຸດປະສົງຂອງການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແມ່ນມີຈຸດປະສົງ ດັ່ງນີ້:

1. ຮັບປະກັນຄວາມຕໍ່ເນື່ອງຂອງການດຳເນີນງານທີ່ສຳຄັນຂອງສະຖາບັນການເງິນ;
2. ຮັບປະກັນຄວາມໝັ້ນຄົງຂອງລະບົບການເງິນ ລວມທັງລະບົບຊຳລະສະສາງ;
3. ຈຳກັດການນຳໃຊ້ເງິນຂອງລັດເຂົ້າໃນການແກ້ໄຂ;
4. ປົກປ້ອງເງິນຝາກຂອງຜູ້ຝາກເງິນ.

ທະນາຄານແຫ່ງ ສປປ ລາວ ຈະນຳໃຊ້ມາດຕະການທີ່ເໝາະສົມ ໃນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ໂດຍໃຫ້ມີຄ່າໃຊ້ຈ່າຍໜ້ອຍທີ່ສຸດ ແລະ ຫຼີກເວັ້ນການສ້າງຄວາມເສຍຫາຍຕໍ່ມູນຄ່າຂອງຊັບສິນຕ່າງໆ ຍົກເວັ້ນກໍລະນີທີ່ມີຄວາມຈຳເປັນ ເພື່ອໃຫ້ບັນລຸຈຸດປະສົງໃນການແກ້ໄຂ.

**ມາດຕາ 8 ສະພາບສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແມ່ນສະຖາບັນການເງິນທີ່ມີຖານະການເງິນອ່ອນແອ ແລະ ຂາດຄວາມໝັ້ນຄົງ ຊຶ່ງຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ບໍ່ສາມາດປະຕິບັດພັນທະຕໍ່ຜູ້ຝາກເງິນ ຫຼື ເຈົ້າໜີ້ອື່ນ;

2. ລະເມີດລະບຽບການກ່ຽວກັບການຮັກສາຄວາມໝັ້ນຄົງທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ເປັນຕົ້ນ ອັດຕາສ່ວນຄວາມພຽງພໍຂອງທຶນຕໍ່າກວ່າເຄິ່ງໜຶ່ງ, ຂາດສະພາບຄ່ອງຢ່າງຮ້າຍແຮງ ຊຶ່ງບໍ່ສາມາດແກ້ໄຂໄດ້;

3. ການປະຕິບັດມາດຕະການແຕ່ຫົວທີ ບໍ່ປະສົບຜົນສຳເລັດ ຊຶ່ງເຮັດໃຫ້ສະຖາບັນການເງິນນັ້ນ ຕົກໃນສະພາບທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຂອງມາດຕານີ້;

4. ມີການຍັກຍອກ, ສໍ້ໂກງ ຫຼື ບໍ່ໂປ່ງໃສ ໃນການບໍລິຫານ ແລະ ດຳເນີນທຸລະກິດ ຊຶ່ງອາດຈະສົ່ງຜົນກະທົບດ້ານລົບຕໍ່ຄວາມສາມາດໃນການຊຳລະໜີ້ສິນ ແລະ ຕໍ່ຜົນປະໂຫຍດຂອງຜູ້ຝາກເງິນ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາວ່າສະຖາບັນການເງິນໃດໜຶ່ງຕົກຢູ່ໃນພາວະວິກິດນັ້ນ ແມ່ນອີງໃສ່ ໜຶ່ງ ຫຼື ຫຼາຍ ສະພາບການ ດັ່ງນີ້:

1. ບໍ່ສາມາດປະຕິບັດພັນທະຂອງຕົນຕໍ່ຜູ້ຝາກເງິນ ຫຼື ເຈົ້າໜີ້ອື່ນ ຊຶ່ງສະແດງອອກ ດັ່ງນີ້:

- ບໍ່ສາມາດຊຳລະເງິນຝາກ ຫຼື ໜີ້ສິນອື່ນຂອງຕົນ ເມື່ອເຖິງກຳນົດເວລາຊຳລະ ຫຼື ມີຂໍ້ມູນຊີ້ບອກຢ່າງພາວະວິໄສ ວ່າສິ່ງດັ່ງກ່າວຈະເກີດຂຶ້ນໃນອະນາຄົດອັນໃກ້;

- ໄດ້ສະເໜີຂໍກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ເພື່ອແກ້ໄຂດ້ານສະພາບຄ່ອງຢ່າງຕໍ່ເນື່ອງແລ້ວ ແຕ່ສະຖາບັນການເງິນດັ່ງກ່າວ ຍັງຂໍການຊ່ວຍເຫຼືອພິເສດຈາກພາກລັດ ເພື່ອສະກັດກັ້ນການລົ້ມລະລາຍ.

2. ບໍ່ສາມາດຮັກສາອັດຕາສ່ວນຄວາມໝັ້ນຄົງທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ດັ່ງນີ້:

- ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າເຄິ່ງໜຶ່ງຂອງອັດຕາສ່ວນຕໍ່າສຸດ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ;

- ມີການລະເມີດຢ່າງຮ້າຍແຮງຕໍ່ອັດຕາສ່ວນສະພາບຄ່ອງ, ອັດຕາສ່ວນໜີ້ຕ້ອງຮັບທວງຍາກ ຫຼື ອັດຕາສ່ວນຄວາມໝັ້ນຄົງອື່ນ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ;

- ທະນາຄານໄດ້ລະເມີດລະບຽບການອື່ນ ຊຶ່ງສາມາດເປັນສາເຫດໃນການຖອນ ຫຼື ການລົບລ້າງໃບອະນຸຍາດດຳເນີນທຸລະກິດ.

3. ການນຳໃຊ້ມາດຕະການແຕ່ຫົວທີບໍ່ປະສົບຜົນສຳເລັດ ຊຶ່ງສະແດງອອກ ດັ່ງນີ້:

- ສະຖາບັນການເງິນ ບໍ່ສາມາດປະຕິບັດຕາມມາດຕະການແຕ່ຫົວທີ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະການແຕ່ຫົວທີຕໍ່ສະຖາບັນການເງິນ;

- ໄດ້ຈັດຕັ້ງປະຕິບັດມາດຕະການແຕ່ຫົວທີແລ້ວ ແຕ່ບໍ່ສາມາດຟື້ນຟູສະຖາບັນການເງິນໄດ້.

4. ມີການຍັກຍອກ, ສໍ້ໂກງ ຫຼື ບໍ່ໂປ່ງໃສໃນການບໍລິຫານ ແລະ ດຳເນີນທຸລະກິດຂອງຜູ້ຖືຮຸ້ນ, ຜູ້ບໍລິຫານ ຫຼື ພະນັກງານຂອງສະຖາບັນການເງິນ ຊຶ່ງອາດຈະສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ຄວາມໝັ້ນຄົງຂອງສະຖາບັນການເງິນດັ່ງກ່າວ ຫຼື ຈະເຮັດໃຫ້ບໍ່ສາມາດຊຳລະໜີ້ໃຫ້ຜູ້ຝາກເງິນ ແລະ ເຈົ້າໜີ້ອື່ນ.

**ມາດຕາ 9 ການຕົກລົງເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ເມື່ອສະຖາບັນການເງິນໃດໜຶ່ງ ຕົກຢູ່ໃນພາວະວິກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ກົມຄຸ້ມຄອງທະນາຄານທຸລະກິດ ຫຼື ກົມຄຸ້ມຄອງສະຖາບັນການເງິນ ຕ້ອງຄົ້ນຄວ້າ ແລະ ນຳສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາອອກຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ຂອງສະຖາບັນການເງິນ ທີ່ຈະຖືກນຳໃຊ້ມາດຕະການແກ້ໄຂ;
2. ສາເຫດຂອງການນຳໃຊ້ມາດຕະການແກ້ໄຂ;
3. ວິທີການແກ້ໄຂທີ່ຈະນຳໃຊ້;
4. ສິດ ແລະ ພັນທະຂອງສະຖາບັນການເງິນ;
5. ກຳນົດເວລາການແກ້ໄຂ;
6. ວັນເລີ່ມມີຜົນສັກສິດຂອງການນຳໃຊ້ມາດຕະການແກ້ໄຂ;
7. ການແຕ່ງຕັ້ງຄະນະຄວບຄຸມ;
8. ລາຍຊື່ຄະນະຄວບຄຸມ;
9. ສິດ ແລະ ໜ້າທີ່ຂອງຄະນະຄວບຄຸມ;
10. ໜ່ວຍງານຊ່ວຍວຽກ ລວມທັງສິດ ແລະ ໜ້າທີ່ຂອງໜ່ວຍງານດັ່ງກ່າວ;
11. ກຳນົດເວລາການເຄື່ອນໄຫວຂອງຄະນະຄວບຄຸມ;
12. ລະບອບການລາຍງານຂອງຄະນະຄວບຄຸມຕໍ່ທະນາຄານແຫ່ງ ສປປ ລາວ;
13. ຄ່າໃຊ້ຈ່າຍຂອງຄະນະຄວບຄຸມ.

ການອອກຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແມ່ນບໍ່ຈຳເປັນຕ້ອງໄດ້ຮັບການຮັບຮອງ ຫຼື ເຫັນດີ ຈາກຜູ້ຖືຮຸ້ນ ຫຼື ເຈົ້າໜີ້ ຂອງສະຖາບັນການເງິນດັ່ງກ່າວ.

**ມາດຕາ 10 ການແຈ້ງກ່ຽວກັບການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ຄະນະຄວບຄຸມ ຕ້ອງດຳເນີນການແຈ້ງຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂ ໃຫ້ສະຖາບັນການເງິນດັ່ງກ່າວຊາບທັນທີ.

ຄະນະຄວບຄຸມ ຈະແຈ້ງກ່ຽວກັບການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ໃຫ້ອົງການທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຊາບ.

ຄະນະຄວບຄຸມ ສາມາດແຈ້ງ ຫຼື ເຜີຍແຜ່ໃຫ້ສັງຄົມຊາບ ກ່ຽວກັບການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຫຼື ບໍ່ເຜີຍແຜ່ກໍໄດ້ ໃນກໍລະນີເຫັນວ່າການເຜີຍແຜ່ດັ່ງກ່າວ ອາດຈະສົ່ງຜົນກະທົບ ຫຼື ສ້າງຄວາມເສຍຫາຍໃຫ້ການດຳເນີນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ.

**ມາດຕາ 11 ຄະນະຄວບຄຸມ**

ຄະນະຄວບຄຸມ ຕ້ອງດຳເນີນການຄວບຄຸມສະຖາບັນການເງິນທີ່ຢູ່ໃນພາວະວິກິດ ບົນພື້ນຖານຈຸດປະສົງ ດັ່ງນີ້:

1. ຮັກສາມູນຄ່າຊັບສິນຂອງສະຖາບັນການເງິນ ແລະ ສືບຕໍ່ດຳເນີນທຸລະກິດຂອງສະຖາບັນການເງິນ;

2. ປະເມີນຖານະທາງດ້ານການເງິນທີ່ເປັນຈິງຂອງສະຖາບັນການເງິນ;

3. ສ້າງ ແລະ ປະຕິບັດແຜນດຳເນີນງານ ທີ່ກຳນົດກ່ຽວກັບວິທີການແກ້ໄຂ ທີ່ຈະຕ້ອງຈັດຕັ້ງປະຕິບັດ;

4. ສະເໜີທະນາຄານແຫ່ງ ສປປ ລາວ ໃຫ້ຍຸບເລີກສະຖາບັນການເງິນ ແບບບັງຄັບ ຫຼື ຟ້ອງສານເພື່ອຕັດສິນໃຫ້ສະຖາບັນການເງິນລົ້ມລະລາຍ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ໃນກໍລະນີເຫັນວ່າ ມາດຕະການໃນການແກ້ໄຂ ບໍ່ໄດ້ຖືກປະຕິບັດ ຫຼື ບໍ່ບັນລຸຜົນສຳເລັດ.

ການເຂົ້າຄວບຄຸມ ຈະຕ້ອງໃຊ້ເວລາບໍ່ເກີນ ຫົກ ເດືອນ ແລະ ກຳນົດເວລາດັ່ງກ່າວ ສາມາດຕໍ່ໄດ້ອີກສອງຄັ້ງ ຊຶ່ງແຕ່ລະຄັ້ງ ຕ້ອງບໍ່ເກີນ ສາມ ເດືອນ.

ຄະນະຄວບຄຸມ ຕ້ອງນຳໃຊ້ທຸກມາດຕະການທີ່ຈຳເປັນ ເພື່ອໃຫ້ບັນລຸຈຸດປະສົງຂອງການແກ້ໄຂ ແລະ ຈັດຕັ້ງປະຕິບັດການແກ້ໄຂ ໂດຍສອດຄ່ອງຕາມຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຫຼື ບາງກໍລະນີ ຕ້ອງໄດ້ຮັບການເຫັນດີຈາກທະນາຄານແຫ່ງ ສປປ ລາວ.

ຄະນະຄວບຄຸມ ອາດຖືກປົດຕຳແໜ່ງຈາກການປະຕິບັດໜ້າທີ່ໄດ້ທຸກເວລາ ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າປະຕິບັດໜ້າທີ່ບໍ່ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ.

ທຸກການດຳເນີນການທີ່ກ່ຽວຂ້ອງກັບສະຖາບັນການເງິນ ຊຶ່ງກໍລະນີທີ່ຄະນະຄວບຄຸມ ມີຜົນປະໂຫຍດສຳຄັນ ຫຼື ມີສາຍພົວພັນໃນບັນຫາດັ່ງກ່າວ ຄະນະຄວບຄຸມ ຈະສາມາດດຳເນີນການໄດ້ ກໍຕໍ່ເມື່ອໄດ້ຮັບການເຫັນດີລ່ວງໜ້າ ຢ່າງເປັນລາຍລັກອັກສອນ ຈາກທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ.

ຄະນະຄວບຄຸມ ຕ້ອງປະຕິບັດວຽກງານສອດຄ່ອງຕາມລະບຽບການ, ຄຳແນະນຳ ແລະ ການຊີ້ນຳຂອງທະນາຄານແຫ່ງ ສປປ ລາວ ໃນຕະຫຼອດໄລຍະເວລາຂອງການເຂົ້າຄວບຄຸມສະຖາບັນການເງິນ ແລະ ຕ້ອງມີຄວາມຮັບຜິດຊອບ ຕໍ່ທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດຄ່າຕອບແທນຂອງຄະນະຄວບຄຸມ ສຳລັບການປະຕິບັດໜ້າທີ່ຂອງພວກກ່ຽວ ຕາມເງື່ອນໄຂທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າເໝາະສົມ ຊຶ່ງສະຖາບັນການເງິນທີ່ຢູ່ໃນພາວະວິກິດນັ້ນ ເປັນຜູ້ຮັບຜິດຊອບຊຳລະຄ່າຕອບແທນດັ່ງກ່າວ.

ຄະນະຄວບຄຸມ ຕ້ອງປະກອບດ້ວຍບຸກຄົນທີ່ມີມາດຖານເງື່ອນໄຂທີ່ເໝາະສົມ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

## ມາດຕາ 12 ການເຂົ້າຄວບຄຸມ

ເມື່ອຄະນະຄວບຄຸມ ເຂົ້າຄວບຄຸມສະຖາບັນການເງິນທີ່ຢູ່ໃນພາວະວິກິດ, ສະຖາບັນການເງິນດັ່ງກ່າວ ລວມທັງຜູ້ບໍລິຫານ ແລະ ພະນັກງານ ຕ້ອງສົ່ງມອບບົດລາຍງານ, ຊັບສິນ, ທຸລະກິດ ແລະ ວຽກງານຂອງສະຖາບັນການເງິນ ໃຫ້ຄະນະຄວບຄຸມ ໂດຍມີບົດບັນທຶກມອບຮັບຢ່າງເປັນລາຍລັກອັກສອນ ເພື່ອດຳເນີນການກວດກາ ແລະ ຕ້ອງສະໜອງສິ່ງອຳນວຍຄວາມສະດວກ ໃຫ້ຄະນະຄວບຄຸມ ເພື່ອດຳເນີນທຸລະກິດ ແລະ ວຽກງານຂອງສະຖາບັນການເງິນ.

ຄະນະຄວບຄຸມ ຕ້ອງດຳເນີນການຄວບຄຸມບົດລາຍງານ, ຊັບສິນ, ທຸລະກິດ ແລະ ວຽກງານທີ່ກ່ຽວຂ້ອງຂອງສະຖາບັນການເງິນ, ດຳເນີນທຸລະກິດ ແລະ ເຄື່ອນໄຫວວຽກງານຂອງສະຖາບັນການເງິນ ໃນຊື່ ຫຼື ໃນນາມຂອງສະຖາ ບັນການເງິນ ພາຍໃນເວລາຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຫຼື ຈົນກວ່າຂໍ້ຕົກລົງດັ່ງກ່າວ ຖືກລົບລ້າງ.

ໃນໄລຍະເວລາທີ່ຂໍ້ຕົກລົງດັ່ງກ່າວ ມີຜົນສັກສິດ, ທຸກສິດຂອງສະຖາບັນການເງິນ, ຜູ້ບໍລິຫານ ແລະ ຜູ້ຖືຮຸ້ນ ທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ, ກົດລະບຽບພາຍໃນຂອງສະຖາບັນການເງິນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແມ່ນຕ້ອງມອບຕໍ່ໃຫ້ຄະນະຄວບຄຸມ.

ໃນໄລຍະເວລາທີ່ຂໍ້ຕົກລົງດັ່ງກ່າວ ມີຜົນສັກສິດ, ຜູ້ບໍລິຫານ ແລະ ພະນັກງານຂອງສະຖາບັນການເງິນ ບໍ່ມີສິດເຂົ້າຮ່ວມໃນກິດຈະການໃດຂອງສະຖາບັນການເງິນ ບໍ່ວ່າທາງກົງ ຫຼື ທາງອ້ອມ, ຍົກເວັ້ນກໍລະນີທີ່ໄດ້ຮັບອະນຸຍາດຈາກຄະນະຄວບຄຸມ.

ເມື່ອເຂົ້າຄວບຄຸມສະຖາບັນການເງິນທີ່ຢູ່ໃນພາວະວິກິດແລ້ວ ຄະນະຄວບຄຸມ ສາມາດສັ່ງສະຖາບັນການເງິນດັ່ງກ່າວ ບໍ່ໃຫ້ຈ່າຍຄ່າຕອບແທນໃດໆ ທີ່ໄດ້ສະສົມຜ່ານມາ, ຕາມລະບຽບພາຍໃນ ຫຼື ຕາມຂໍ້ຕົກລົງທີ່ກ່ຽວຂ້ອງຂອງສະຖາບັນການເງິນ ທີ່ມີຜົນສັກສິດກ່ອນການເຂົ້າຄວບຄຸມ ໃຫ້ຜູ້ບໍລິຫານ ແລະ ພະນັກງານຂອງສະຖາບັນການເງິນດັ່ງກ່າວ ຍົກເວັ້ນໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນ ຈາກຄະນະຄວບຄຸມ.

## ມາດຕາ 13 ສິດ ແລະ ໜ້າທີ່ຂອງຄະນະຄວບຄຸມ

ຄະນະຄວບຄຸມ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ, ລະບຽບການທີ່ກ່ຽວຂ້ອງ ແລະ ມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາຄືນ ວ່າຄວນແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຫຼື ສະເໜີສານເພື່ອຕັດສິນໃຫ້ສະຖາບັນການເງິນດັ່ງກ່າວ ລົ້ມລະລາຍ;

2. ປົດຕຳແໜ່ງ ຫຼື ປ່ຽນແທນສະພາບໍລິຫານ ແລະ ຜູ້ບໍລິຫານຂອງສະຖາບັນການເງິນ ທີ່ຢູ່ພາຍໃຕ້ການແກ້ໄຂ ແລະ ເກັບກູ້ຊັບສິນ ຫຼື ເງິນ ຄືນຈາກພວກກ່ຽວ ທີ່ໄດ້ຍັກຍອກ ຫຼື ສໍ້ໂກງໄປ;

3. ດຳເນີນທຸລະກິດ ແລະ ແກ້ໄຂສະຖາບັນການເງິນ ລວມທັງສິດໃນການຍົກເລີກສັນຍາ, ການສືບຕໍ່ ຫຼື ການມອບໝາຍສັນຍາ, ການຊື້ ຫຼື ການຂາຍຊັບສິນ, ການປັບຫຼຸດມູນຄ່າໜີ້ ແລະ ການດຳເນີນການໃດໜຶ່ງ ທີ່ຈຳເປັນສຳລັບການປັບປຸງໂຄງສ້າງ, ຢຸດການເຄື່ອນໄຫວທຸລະກຳໃດໜຶ່ງຂອງສະຖາບັນການເງິນ, ຖອນການລົງທຶນ ຫຼື ຂາຍກິດຈະການຂອງບໍລິສັດໃນກຸ່ມ;

4. ປະຕິບັດສິດແທນຜູ້ຖືຮຸ້ນຂອງສະຖາບັນການເງິນ ທີ່ຢູ່ພາຍໃຕ້ການແກ້ໄຂ ໃນທຸລະກຳໃດໜຶ່ງ ເຊັ່ນ: ການຂາຍສະຖາບັນການເງິນ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ໃຫ້ຜູ້ເຂົ້າຊື້ຮຸ້ນ, ການເພີ່ມທຶນ ຫຼື ການປັບປຸງໂຄງສ້າງຂອງສະຖາບັນການເງິນ;

5. ຮັບປະກັນຄວາມຕໍ່ເນື່ອງຂອງການບໍລິການ ແລະ ພາກສ່ວນທີ່ສຳຄັນ ດ້ວຍການ:

- ສັ່ງໃຫ້ສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ ໃຫ້ການບໍລິການແກ່ຜູ້ສືບທອດຂອງຕົນ ຫຼື ບໍລິສັດທີ່ເຂົ້າຖືຮຸ້ນ ເປັນເວລາຊົ່ວຄາວ;
- ສັ່ງໃຫ້ບໍລິສັດທີ່ຢູ່ໃນກຸ່ມດຽວກັນ ສືບຕໍ່ໃຫ້ການບໍລິການແກ່ສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ;
- ຈັດຫາການບໍລິການຈາກບຸກຄົນທີ່ສາມ ຊຶ່ງບໍ່ຢູ່ໃນເຄືອຂ່າຍ ໃນນາມສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ.

6. ໂຈະສິດໃນການເລັ່ງທວງ, ການສິ້ນສຸດ ຫຼື ໄລ່ລຽງຊຳລະໜີ້ສິນ ຊຶ່ງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ເປັນຄູ່ສັນຍາ ໂດຍໂຈະພາຍໃນເວລາບໍ່ເກີນ ຫ້າ ວັນລັດຖະການ ນັບແຕ່ວັນແຈ້ງຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂ ໃຫ້ສະຖາບັນທີ່ຢູ່ໃນພາວະວິກິດ ຊາບ ເປັນຕົ້ນໄປ. ຄະນະຄວບຄຸມ ສາມາດຕໍ່ໄລຍະເວລາດັ່ງກ່າວໄດ້ ໃນກໍລະນີເຫັນວ່າມີຄວາມຈຳເປັນ;

7. ໂຈະພັນທະໃນການຊຳລະ ຫຼື ສັນຍາສົ່ງມອບ ຊຶ່ງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ເປັນຄູ່ສັນຍາ ໂດຍໂຈະພາຍໃນໃນເວລາບໍ່ເກີນ ຫ້າ ວັນລັດຖະການ ນັບແຕ່ວັນແຈ້ງຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂ ໃຫ້ສະຖາບັນທີ່ຢູ່ໃນພາວະວິກິດ ຊາບ ເປັນຕົ້ນໄປ. ຄະນະຄວບຄຸມ ສາມາດຕໍ່ໄລຍະເວລາດັ່ງກ່າວໄດ້ ໃນກໍລະນີເຫັນວ່າມີຄວາມຈຳເປັນ;

8. ໂຈະສິດໃນການຍຶດ, ການເກັບເງິນ ຫຼື ຊັບສິນ ພາຍໃຕ້ສັນຍາ ຊຶ່ງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ເປັນຄູ່ສັນຍາ ໂດຍໂຈະພາຍໃນເວລາບໍ່ເກີນ ຫ້າ ວັນລັດຖະການ ນັບແຕ່ວັນແຈ້ງຂໍ້ຕົກລົງວ່າດ້ວຍການເຂົ້າແກ້ໄຂ ໃຫ້ສະຖາບັນທີ່ຢູ່ໃນພາວະວິກິດ ຊາບ ເປັນຕົ້ນໄປ. ຄະນະຄວບຄຸມ ສາມາດຕໍ່ໄລຍະເວລາດັ່ງກ່າວໄດ້ ໃນກໍລະນີເຫັນວ່າມີຄວາມຈຳເປັນ;

9. ໂຈະການປະຕິບັດລະບຽບການພາຍໃນຂອງສະຖາບັນການເງິນທີ່ຢູ່ໃນພາວະວິກິດ;

10. ແຕ່ງຕັ້ງຄະນະຊ່ວຍວຽກ ຕາມຄວາມເໝາະສົມ;

11. ນຳໃຊ້ ໜຶ່ງ ຫຼື ຫຼາຍມາດຕະການ ຕໍ່ສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 14 ການລາຍງານຂອງຄະນະຄວບຄຸມ**

ຄະນະຄວບຄຸມ ຕ້ອງກະກຽມບົດລາຍງານ ແລະ ນຳສົ່ງບົດລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບສະພາບທາງດ້ານການເງິນ ແລະ ການຄາດຄະເນອະນາຄົດ ຂອງສະຖາບັນການເງິນ.

ບົດລາຍງານ ຕ້ອງກຳນົດລາຍລະອຽດກ່ຽວກັບມາດຕະການທີ່ໄດ້ນຳໃຊ້, ຖານະທາງດ້ານການເງິນ ແລະ ຄວາມສາມາດໃນການຊຳລະສະສາງ;

ບົດລາຍງານ ຕ້ອງຄັດຕິດແຜນການດຳເນີນງານ ຊຶ່ງຕ້ອງກຳນົດກ່ຽວກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ແລະ ຜົນໄດ້ ຜົນເສຍ ທີ່ຕິດພັນ ລະຫວ່າງ ການແກ້ໄຂສະຖາບັນການເງິນ ແລະ ການຍຸບເລີກສະຖາບັນການເງິນແບບບັງຄັບ ຫຼື ການຟ້ອງສານເພື່ອຕັດສິນໃຫ້ສະຖາບັນການເງິນ ລົ້ມລະລາຍ.

ຄະນະຄວບຄຸມ ຕ້ອງສະເໜີບົດລາຍງານ ຫຼື ຂໍ້ມູນເພີ່ມເຕີມໃດໜຶ່ງ ໃຫ້ທະນາຄານ ແຫ່ງ ສປປ ລາວ ທັນທີ ຕາມການກຳນົດ.

**ມາດຕາ 15 ການສິ້ນສຸດໜ້າທີ່ຂອງຄະນະຄວບຄຸມ**

ຄະນະຄວບຄຸມ ຕ້ອງຢຸດຕິການປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງ ໂດຍອີງຕາມພື້ນຖານ ດັ່ງນີ້:

1. ສະຖາບັນການເງິນທີ່ຢູ່ໃນພາວະວິກິດ ໄດ້ຮັບການແກ້ໄຂສຳເລັດຜົນ;
2. ສານໄດ້ຕັດສິນສະຖາບັນການເງິນທີ່ຢູ່ໃນພາວະວິກິດ ໃຫ້ລົ້ມລະລາຍ, ຖືກຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ໄດ້ເລີ່ມການຊຳລະສະສາງແບບບັງຄັບ;
3. ຄົບອາຍຸການປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະຄວບຄຸມ ຕ້ອງສະຫຼຸບ ແລະ ລາຍງານຄັ້ງສຸດທ້າຍ ຕໍ່ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ສິບວັນລັດຖະການ ພາຍຫຼັງການສິ້ນສຸດໜ້າທີ່ຂອງຕົນ.

**ມາດຕາ 16 ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການແກ້ໄຂ**

ທະນາຄານແຫ່ງ ສປປ ລາວ ຈະໃຫ້ການຊ່ວຍເຫຼືອທາງດ້ານການເງິນແບບຊົ່ວຄາວ ເພື່ອປະກອບສ່ວນໃນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ, ບໍລິສັດໃນກຸ່ມຂອງສະຖາບັນການເງິນດັ່ງກ່າວ ຫຼື ສະຖາບັນການເງິນຂົວຕໍ່.

ທະນາຄານແຫ່ງ ສປປ ລາວ ຈະສະໜອງການຊ່ວຍເຫຼືອທາງດ້ານການເງິນແບບຊົ່ວຄາວ ກໍຕໍ່ເມື່ອຄົບເງື່ອນໄຂ ດັ່ງນີ້:

1. ມີຄວາມຈຳເປັນເພື່ອບັນລຸຈຸດປະສົງຂອງການແກ້ໄຂ;
2. ແຫຼ່ງທຶນທັງໝົດຂອງພາກເອກະຊົນໄດ້ໝົດລົງ ຫຼື ບໍ່ສາມາດບັນລຸຈຸດປະສົງຂອງການແກ້ໄຂໄດ້;
3. ມີການຫຼຸດມູນຄ່າຮຸ້ນ ຫຼື ຈຳນວນຮຸ້ນຂອງຜູ້ຖືຮຸ້ນ ຕາມຈຳນວນເງິນທີ່ຂາດທຶນ ແລະ ໜີ້ຂອງເຈົ້າໜີ້ຕ້ອງສິ່ງສຳຮອງ ຂອງສະຖາບັນການເງິນດັ່ງກ່າວ ໄດ້ຮັບການລຶບລ້າງ ຫຼື ຫັນເປັນທຶນ.

ເງິນທີ່ທະນາຄານແຫ່ງ ສປປ ລາວ ຊ່ວຍເຫຼືອຊົ່ວຄາວນັ້ນ ສາມາດນຳໃຊ້ ດັ່ງນີ້:

1. ການເພີ່ມທຶນຂອງສະຖາບັນການເງິນ ທີ່ຢູ່ພາຍໃຕ້ການແກ້ໄຂ;
2. ໃຊ້ເປັນແຫຼ່ງທຶນຂອງສະຖາບັນການເງິນຂົວຕໍ່;
3. ອຳນວຍຄວາມສະດວກໃຫ້ການໂອນຮຸ້ນ ຫຼື ການໂອນຊັບສິນ ແລະ ໜີ້ສິນ ທີ່ຖືກຄັດເລືອກ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການກ່ຽວກັບການຊ່ວຍເຫຼືອທາງດ້ານການເງິນຊົ່ວຄາວ ໃຫ້ສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແລະ ລະບຽບການກ່ຽວກັບການດຳເນີນງານ ແລະ ການຄຸ້ມຄອງບໍລິຫານ ຂອງສະຖາບັນການເງິນຂ້າງຕົ້ນ.

## ໝວດທີ 3
## ວິທີການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ

### ມາດຕາ 17 ວິທີການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ

ນອກຈາກມາດຕະການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ຄະນະຄວບຄຸມ ສາມາດນຳໃຊ້ ໜຶ່ງ ຫຼື ຫຼາຍວິທີແກ້ໄຂ ດັ່ງນີ້:

1. ການເພີ່ມທຶນ;
2. ການຄວບ ແລະ ການຂາຍ ກິດຈະການ;
3. ການໂອນຊັບສິນ ແລະ ໜີ້ສິນ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງສະຖາບັນການເງິນທີ່ຖືກຄວບຄຸມ ໃຫ້ສະຖາບັນການເງິນອື່ນ;
4. ວິທີການອື່ນທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າເໝາະສົມ.

ໃນກໍລະນີທີ່ຄະນະຄວບຄຸມ ໄດ້ນຳໃຊ້ທຸກວິທີການຕາມທີ່ໄດ້ກຳນົດໄວ້ໃນວັກ **1** ຂອງມາດຕານີ້ແລ້ວ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໃຫ້ສຳເລັດ ຄະນະຄວບຄຸມສາມາດສະເໜີທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຍຸບເລີກສະຖາບັນການເງິນດັ່ງກ່າວ ແບບບັງຄັບ ຫຼື ຟ້ອງສານເພື່ອຕັດສິນໃຫ້ສະຖາບັນການເງິນດັ່ງກ່າວ ລົ້ມລະລາຍ.

### ມາດຕາ 18 ການເພີ່ມທຶນ

ຄະນະຄວບຄຸມ ສາມາດດຳເນີນການເພີ່ມທຶນຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ ດັ່ງນີ້:

1. ແຈ້ງໃຫ້ຜູ້ຖືຮຸ້ນເດີມຂອງສະຖາບັນການເງິນ ໃຫ້ເພີ່ມທຶນ ໂດຍຜູ້ຖືຮຸ້ນຕ້ອງຍື່ນໜັງສືຄຳໝັ້ນສັນຍາເພີ່ມທຶນ ມາຍັງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ. ໃນໜັງສືຄຳໝັ້ນສັນຍາເພີ່ມທຶນດັ່ງກ່າວ ຕ້ອງລະບຸກຳນົດເວລາທີ່ຜູ້ຖືຮຸ້ນຈະຕ້ອງຖອກທຶນ ພ້ອມດ້ວຍເອກະສານຢັ້ງຢືນຖານະການເງິນ;

2. ດຳເນີນການເພີ່ມທຶນຂອງສະຖາບັນການເງິນ ດ້ວຍການອອກຮຸ້ນໃຫ້ຜູ້ຖືຮຸ້ນຜູ້ໃໝ່ ໃນກໍລະນີ ດັ່ງນີ້:

2.1. ຜູ້ຖືຮຸ້ນເດີມ ບໍ່ຍື່ນໜັງສືຄຳໝັ້ນສັນຍາເພີ່ມທຶນ ຕາມທີ່ລະບຸໄວ້ໃນຂໍ້ 1 ຂອງມາດຕານີ້;

2.2. ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າ:

- ມີຄວາມຈຳເປັນຕ້ອງແກ້ໄຂສະຖາບັນການເງິນຢ່າງຮີບດ່ວນ ເພື່ອຮັກສາຄວາມໝັ້ນຄົງທາງດ້ານການເງິນ;

- ຜູ້ຖືຮຸ້ນເດີມ ບໍ່ມີຄວາມເໝາະສົມທີ່ຈະຖືອັດຕາສ່ວນທຶນທີ່ສຳຄັນ ຢູ່ໃນສະຖາບັນການເງິນອີກຕໍ່ໄປ;

- ຜູ້ຖືຮຸ້ນເດີມ ບໍ່ສາມາດເພີ່ມທຶນ ຕາມມາດຕະການແກ້ໄຂແຕ່ຫົວທີ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ;

- ຜູ້ຖືຮຸ້ນເດີມຂອງສະຖາບັນການເງິນ ບໍ່ມີສິດທີ່ຈະຊື້ຮຸ້ນ ທີ່ອອກໃໝ່ນັ້ນອີກ.

3. ໃນການດຳເນີນການເພີ່ມທຶນໃໝ່ໂດຍຜູ້ຖືຮຸ້ນຜູ້ໃໝ່, ຄະນະຄວບຄຸມ ຕ້ອງດຳເນີນການ ດັ່ງນີ້:

- ຫຼຸດມູນຄ່າຮຸ້ນລົງ ເພື່ອສະທ້ອນໃຫ້ເຫັນການຂາດທຶນ ໃນກໍລະນີເຫັນວ່າຈຳເປັນ ເຖິງວ່າຈະມີບົດບັນຍັດອື່ນຂອງກົດໝາຍກຳນົດໄວ້ ກໍຕາມ;

- ກຳນົດຈຳນວນ ແລະ ປະເພດຂອງທຶນທີ່ຕ້ອງເພີ່ມ ເພື່ອເຮັດໃຫ້ສະຖາບັນການເງິນ ມີທຶນສອດຄ່ອງຕາມລະບຽບການ;

- ໃຫ້ສະຖາບັນການເງິນເພີ່ມຮຸ້ນ ຕາມຈຳນວນທີ່ກຳນົດໂດຍຄະນະຄວບຄຸມ ແລະ ດຳເນີນການຂາຍຮຸ້ນດັ່ງກ່າວ ໃຫ້ຜູ້ຖືຮຸ້ນຜູ້ໃໝ່.

**ມາດຕາ 19 ການຄວບ ຫຼື ການຂາຍ ກິດຈະການ**

ການຄວບກິດຈະການຂອງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ເຂົ້າກັບສະຖາບັນການເງິນອື່ນ ຫຼື ຂາຍກິດຈະການຂອງສະຖາບັນການເງິນດັ່ງກ່າວ ສ່ວນໃດໜຶ່ງ ຫຼື ທັງໝົດ ໃຫ້ບຸກຄົນທີສາມນັ້ນ ຕ້ອງບົນພື້ນຖານການປະເມີນມູນຄ່າຊັບສິນ ແລະ ໜີ້ສິນຕົວຈິງຂອງສະຖາບັນການເງິນ ຢ່າງຮອບຄອບ ຊຶ່ງປະຕິບັດໂດຍຜູ້ປະເມີນເອກະລາດ.

ຜູ້ທີ່ສົນໃຈຊື້ກິດຈະການນັ້ນ ຕ້ອງເປັນສະຖາບັນການເງິນ ຫຼື ນິຕິບຸກຄົນ ທີ່ມີຄວາມເຂັ້ມແຂງທາງດ້ານການເງິນ, ມີຄວາມສາມາດໃນການຊຳລະໜີ້ ແລະ ມີຄວາມຊ່ຽວຊານ, ຄວາມສາມາດ ແລະ ຊັບພະຍາກອນທີ່ພຽງພໍເພື່ອຮັບເອົາຮຸ້ນທີ່ໂອນ ຢ່າງມີປະສິດທິພາບ ແລະ ຮັບປະກັນການຄົງຕົວຂອງສະຖາບັນການເງິນ.

ຂັ້ນຕອນການຄວບ ແລະ ການຂາຍກິດຈະການ ແມ່ນປະຕິບັດຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ໃນແຕ່ລະໄລຍະ.

**ມາດຕາ 20 ການໂອນຊັບສິນ ແລະ ໜີ້ສິນ**

ຄະນະຄວບຄຸມ ສາມາດໂອນຊັບສິນ ແລະ ໜີ້ສິນທີ່ໄດ້ຄັດເລືອກ, ລວມທັງສິດ ແລະ ພັນທະ ທີ່ຖືກຕ້ອງຕາມກົດໝາຍ ຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການແກ້ໄຂ ໃຫ້ບຸກຄົນທີສາມ.

ຜູ້ຊື້ ຕ້ອງມີໃບອະນຸຍາດດຳເນີນທຸລະກິດການເງິນ-ການທະນາຄານ ຢູ່ ສປປ ລາວ, ເປັນຜູ້ສາມາດຊຳລະໜີ້ໄດ້ ແລະ ມີຄວາມຊ່ຽວຊານ, ຄວາມສາມາດ ແລະ ຊັບພະຍາກອນທີ່ພຽງພໍ ເພື່ອຮັບເອົາຊັບສິນ ແລະ ໜີ້ສິນທີ່ໂອນ ຢ່າງມີປະສິດທິພາບ ແລະ ປະກອບສ່ວນໃນການແກ້ໄຂໃຫ້ບັນລຸໄດ້ຕາມຈຸດປະສົງ.

ການໂອນຊັບສິນ ແລະ ໜີ້ສິນຂອງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຕ້ອງປະຕິບັດຕາມກົນໄກຕະຫຼາດ ແລະ ຕ້ອງປະເມີນມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ເປັນຈິງ ແລະ ຮອບຄອບ ໂດຍບໍລິສັດປະເມີນເອກະລາດ ຊຶ່ງມີຄວາມໜ້າເຊື່ອຖື.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການກ່ຽວກັບການຄັດເລືອກຊັບສິນ ແລະ ໜີ້ສິນທີ່ຕ້ອງໂອນ.

# ໝວດທີ 4
# ການແກ້ໄຂວິກິດຂອງສະຖາບັນການເງິນໃນກຸ່ມ ແລະ ສາຂາສະຖາບັນການເງິນຕ່າງປະເທດ

**ມາດຕາ 21 ການແກ້ໄຂວິກິດຂອງສະຖາບັນການເງິນໃນກຸ່ມ**

ທະນາຄານແຫ່ງ ສປປ ລາວ ດຳເນີນການແກ້ໄຂວິກິດຂອງສະຖາບັນການເງິນ ທີ່ເປັນສະມາຊິກໃນກຸ່ມສະຖາບັນການເງິນ ໂດຍສອດຄ່ອງຕາມມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ໂດຍນຳໃຊ້ມາດຕະການແກ້ໄຂ ທີ່ຫຼຸດຜ່ອນຜົນກະທົບດ້ານລົບຕໍ່ສະມາຊິກໃນຂອງກຸ່ມ.

**ມາດຕາ 22 ການແກ້ໄຂວິກິດຂອງສາຂາສະຖາບັນການເງິນຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ດຳເນີນການແກ້ໄຂສາຂາສະຖາບັນການເງິນຕ່າງປະເທດ ທີ່ຢູ່ໃນພາວະວິກິດ ໂດຍແຈ້ງໃຫ້ສຳນັກງານໃຫຍ່ຂອງສາຂາດັ່ງກ່າວ ເຂົ້າມາດຳເນີນການແກ້ໄຂ. ສຳນັກງານໃຫຍ່ຂອງສາຂາດັ່ງກ່າວ ຕ້ອງແຈ້ງຕອບໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ ຫ້າ ວັນລັດຖະການ.

ໃນກໍລະນີຈຳເປັນ, ຮີບດ່ວນ ຫຼື ກໍລະນີທີ່ສຳນັກງານໃຫຍ່ ບໍ່ເຂົ້າມາດຳເນີນການແກ້ໄຂ ຫຼື ເຂົ້າມາດຳເນີນການແກ້ໄຂແລ້ວ ແຕ່ບໍ່ສາມາດແກ້ໄຂໄດ້ ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຄວບຄຸມ ເພື່ອເຂົ້າໄປດຳເນີນການແກ້ໄຂ ຫຼື ຍຸບເລີກສາຂາດັ່ງກ່າວ ພ້ອມທັງດຳເນີນການຊຳລະສະສາງ.

ໃນກໍລະນີທີ່ສຳນັກງານໃຫຍ່ເຂົ້າມາແກ້ໄຂວິກິດຂອງສາຂາດັ່ງກ່າວ ຊຶ່ງທະນາຄານແຫ່ງ ສປປ ລາວ ເຫັນວ່າ ຜູ້ຝາກເງິນ ຫຼື ເຈົ້າໜີ້ຂອງສາຂາດັ່ງກ່າວ ຈະບໍ່ໄດ້ຮັບການປະຕິບັດທີ່ສະເໝີພາບ ຫຼື ການດຳເນີນການຂອງສຳນັກງານໃຫຍ່ນັ້ນ ຈະສ້າງຄວາມເສຍຫາຍຕໍ່ລະບົບການເງິນຂອງ ສປປ ລາວ ທະນາຄານແຫ່ງ ສປປ ລາວ ຈະສັ່ງໃຫ້ສຳນັກງານໃຫຍ່ນັ້ນ ແກ້ໄຂບັນຫາ ຫຼື ຢຸດການດຳເນີນການແກ້ໄຂຂອງຕົນທັນທີ.

**ມາດຕາ 23 ການຮ່ວມກັບຕ່າງປະເທດໃນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເຂົ້າຮ່ວມເຮັດສັນຍາ, ບົດບັນທຶກຄວາມເຂົ້າໃຈ ແລະ ຂໍ້ຕົກລົງກ່ຽວກັບການປະສານງານ, ການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານ ກັບອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ ໃນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຕາມຂອບເຂດທີ່ໄດ້ຕົກລົງກັນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສັນຍາ, ບົດບັນທຶກຄວາມເຂົ້າໃຈ ແລະ ຂໍ້ຕົກລົງກ່ຽວກັບປະສານງານກັບອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ ອາດຈະດຳເນີນໂດຍທົ່ວໄປ ຫຼື ສະເພາະ ແລະ ອາດຈະລວມເອົາ:

1. ຂະບວນການໃນການແລກປ່ຽນຂໍ້ມູນໃຫ້ທັນການ ກ່ຽວກັບບັນຫາທີ່ໄດ້ຕົກລົງກັນກັບອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ ລວມທັງແຜນຮອງຮັບພາວະວິກິດ, ການປະເມີນການແກ້ໄຂບັນຫາ, ແຜນການແກ້ໄຂບັນຫາ, ມາດຕະການແກ້ໄຂແຕ່ຫົວທີ ແລະ ມາດຕະການແກ້ໄຂສະພາວະວິກິດ;

2. ຂະບວນການໃນການປຶກສາຫາລື ແລະ/ຫຼື ການແຈ້ງການລ່ວງໜ້າ ໂດຍອົງການທີ່ມີສິດອຳນາດກ່ຽວຂ້ອງ ຂອງສອງຝ່າຍ;

3. ຂະບວນການໃນການປະສານງານ ກ່ຽວກັບການດຳເນີນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ;

4. ຂະບວນການໃນການຮັບຮູ້ ແລະ ການສະໜັບສະໜູນການດຳເນີນການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ຂອງອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເຂົ້າຮ່ວມໃນຄະນະກຳມະການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະກິດ ທີ່ສ້າງຕັ້ງຂຶ້ນໂດຍອົງການທີ່ມີສິດອຳນາດຂອງຕ່າງປະເທດ ຫຼື ສາມາດສ້າງຕັ້ງຄະນະກຳມະການດັ່ງກ່າວຂຶ້ນສຳລັບການແກ້ໄຂສະຖາບັນການເງິນຢູ່ພາຍໃນປະເທດ ໃນກໍລະນີເຫັນວ່າເໝາະສົມ.

ທະນາຄານແຫ່ງ ສປປ ລາວ ສາມາດໂຈະ ຫຼື ຍົກເລີກ ການແລກປ່ຽນຂໍ້ມູນຄວາມລັບ ກັບອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ ໃນກໍລະນີເຫັນວ່າອົງການດັ່ງກ່າວ ບໍ່ສາມາດຮັກສາຄວາມລັບ ຕາມທີ່ກຳນົດໄວ້ໃນສັນຍາ, ບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງ.

ທະນາຄານແຫ່ງ ສປປ ລາວ ສາມາດນຳໃຊ້ມາດຕະການໃດໜຶ່ງ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ເພື່ອສະໜັບສະໜູນການແກ້ໄຂທີ່ດຳເນີນໂດຍອົງການທີ່ມີສິດອຳນາດກ່ຽວຂ້ອງຂອງຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ.

## ໝວດທີ 5
## ການຊຳລະສະສາງ

### ມາດຕາ 24 ການຊຳລະສະສາງ

ພາຍຫຼັງທີ່ທະນາຄານແຫ່ງ ສປປ ລາວ ຕົກລົງຍຸບເລີກສະຖາບັນການເງິນທີ່ຢູ່ໃນພາວະວິກິດ ແບບບັງຄັບ ຫຼື ພາຍຫຼັງທີ່ສານໄດ້ຕັດສິນສະຖາບັນການເງິນດັ່ງກ່າວ ໃຫ້ລົ້ມລະລາຍແລ້ວ ທະນາຄານແຫ່ງ ສປປ ລາວ ຈະດຳເນີນການຖອນໃບອະນຸຍາດດຳເນີນທຸລະກິດ ແລະ ຊຳລະສະສາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

### ມາດຕາ 25 ການແຕ່ງຕັ້ງຄະນະ ຫຼື ຜູ້ຊຳລະສະສາງ

ກົມຄຸ້ມຄອງທະນາຄານທຸລະກິດ ຫຼື ກົມຄຸ້ມຄອງສະຖາບັນການເງິນ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ພິຈາລະນາອອກຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊຳລະສະສາງ ເພື່ອດຳເນີນການຊຳລະສະສາງສະຖາບັນການເງິນ ທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດ.

ຂໍ້ຕົກລົງແຕ່ງຕັ້ງຄະນະ ຫຼື ຜູ້ຊຳລະສະສາງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ລາຍຊື່ຄະນະ ຫຼື ຊື່ຜູ້ຊຳລະສະສາງ;
2. ສິດ ແລະ ໜ້າທີ່ ຂອງຄະນະ ຫຼື ຜູ້ຊຳລະສະສາງ;
3. ກຳນົດເວລາການເຄື່ອນໄຫວ;
4. ລະບອບການລາຍງານໃຫ້ທະນາຄານແຫ່ງ ສປປ ລາວ;
5. ຄ່າໃຊ້ຈ່າຍໃນການຊຳລະສະສາງ;

6. ການຈັດຕັ້ງປະຕິບັດ.

ໃນກໍລະນີຈໍາເປັນ ທະນາຄານແຫ່ງ ສປປ ລາວ ຈະປ່ຽນແປງ, ຍຸບເລີກຄະນະຊໍາລະສະສາງ, ແຕ່ງຕັ້ງປ່ຽນແທນ ຫຼື ແຕ່ງຕັ້ງເພີ່ມເຕີມ ສະມາຊິກຂອງຄະນະຊໍາລະສະສາງ.

ທະນາຄານແຫ່ງ ສປປ ລາວ ຈະແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບ ກ່ຽວກັບການເຂົ້າດໍາເນີນການຊໍາລະສະສາງສະຖາບັນການເງິນທີ່ຖືກຍຸບເລີກແບບບັງຄັບ ຫຼື ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຄະນະ ຫຼື ຜູ້ຊໍາລະສະສາງ**

ນອກຈາກສິດ ແລະ ໜ້າທີ່ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ຄະນະ ຫຼື ຜູ້ຊໍາລະສະສາງ ມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ເປັນຜູ້ຕາງໜ້າທາງດ້ານກົດໝາຍແຕ່ພຽງຜູ້ດຽວຂອງສະຖາບັນການເງິນ;

2. ເຜີຍແຜ່ ຫຼື ຕິດແຈ້ງການໄວ້ສະຖານທີ່ດໍາເນີນທຸລະກິດຂອງສະຖາບັນການເງິນ ກ່ຽວກັບການດໍາເນີນການຂອງຕົນ ຕາມກົດໝາຍ ຊຶ່ງລະບຸວັນມີຜົນສັກສິດ ແລະ ເວລາໃນການຄອບຄອງກໍາມະສິດ;

3. ຮ້ອງຟ້ອງສານ ເພື່ອຕັດສິນໃຫ້ການກະທໍາ ຫຼື ທຸລະກໍາໃດໜຶ່ງຂອງສະຖາບັນການເງິນ ທີ່ໄດ້ສໍາເລັດໄປແລ້ວພາຍໃນໄລຍະໜຶ່ງປີ ກ່ອນມີການແຕ່ງຕັ້ງຄະນະ ຫຼື ຜູ້ຄວບຄຸມ ໃຫ້ເປັນໂມຄະ ກໍລະນີເຫັນວ່າເປັນການກະທໍາ ຫຼື ທຸລະກໍາ ທີ່ສ້າງຄວາມເສຍຫາຍຕໍ່ສະຖາບັນການເງິນ;

4. ໂອນ ຫຼື ຂາຍຊັບສິນ ແລະ ໜີ້ສິນ;

5. ໂຈະ ຫຼື ຈໍາກັດການຊໍາລະໜີ້ສິນ;

6. ສະເໜີວ່າຈ້າງ ຫຼື ຢຸດຈ້າງພະນັກງານ, ຜູ້ຊ່ຽວຊານ, ທີ່ປຶກສາສະເພາະດ້ານ ເພື່ອເຂົ້າຮ່ວມໃນການຊໍາລະສະສາງ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 27 ຜົນສະທ້ອນຂອງການເຂົ້າຊໍາລະສະສາງ**

ນອກຈາກຜົນສະທ້ອນຂອງການເຂົ້າຊໍາລະສະສາງ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງແລ້ວ ຍັງມີຜົນສະທ້ອນເພີ່ມເຕີມ ດັ່ງນີ້:

1. ການຄິດໄລ່ດອກເບ້ຍ ແລະ ຄ່າປັບໃໝ, ຄ່າໃຊ້ຈ່າຍ ຫຼື ໜີ້ສິນອື່ນຕໍ່ສະຖາບັນການເງິນ ຈະຖືກໂຈະ;

2. ການດໍາເນີນການທາງກົດໝາຍທັງໝົດຕໍ່ສະຖາບັນການເງິນ ຕ້ອງຖືກຢຸດ ຫຼື ໂຈະ;

3. ບໍ່ມີບຸກຄົນໃດ ມີສິດຕໍ່ຊັບສິນຂອງສະຖາບັນການເງິນ ໃນລະຫວ່າງການຊໍາລະສະສາງ;

4. ເຈົ້າໜີ້ ບໍ່ສາມາດຍຶດ, ຂາຍ ຫຼື ເຂົ້າຄອບຄອງຊັບສິນຂອງສະຖາບັນການເງິນ, ບໍ່ສາມາດເລີ່ມ ຫຼື ສືບຕໍ່ການດໍາເນີນການທາງກົດໝາຍ ເພື່ອເກັບໜີ້ຈາກສະຖາບັນການເງິນ;

5. ການໂອນຊັບສິນຂອງສະຖາບັນການເງິນ ທີ່ເກີດຂຶ້ນພາຍຫຼັງທີ່ທະນາຄານແຫ່ງ ສປປ ລາວ ແຕ່ງຕັ້ງຄະນະຊໍາລະສະສາງ ຕ້ອງຖືກຍົກເລີກ. ຄະນະຊໍາລະສະສາງ ສາມາດຍຶດຄືນຊັບສິນທີ່ໄດ້ໂອນ ຫຼື ມູນຄ່າຂອງຊັບສິນດັ່ງກ່າວ ຈາກຜູ້ຮັບໂອນ.

**ມາດຕາ 28 ຂັ້ນຕອນການຊຳລະສະສາງ**

ຄະນະ ຫຼື ຜູ້ຊຳລະສະສາງ ຕ້ອງດຳເນີນການຊຳລະສະສາງ ດັ່ງນີ້:

1. ແຈ້ງຜ່ານຊ່ອງທາງຕ່າງໆ ໃຫ້ຜູ້ຝາກເງິນ, ເຈົ້າໜີ້ອື່ນຊາບ ກ່ຽວກັບປະເພດ ແລະ ຈຳນວນເງິນ ທີ່ພວກກ່ຽວຈະໄດ້ຮັບຈາກການຊຳລະສະສາງ ພາຍໃນເວລາ ສິບຫ້າ ວັນ ພາຍຫຼັງການແຕ່ງຕັ້ງຄະນະ ຫຼື ຜູ້ຊຳລະສະສາງ ຊຶ່ງຜູ້ຝາກເງິນ ຫຼື ເຈົ້າໜີ້ດັ່ງກ່າວ ສາມາດຂັດຄ້ານໄດ້ ພາຍໃນເວລາ ສາມສິບ ວັນ ພາຍຫຼັງໄດ້ຮັບແຈ້ງການ;

2. ແຈ້ງໃຫ້ຜູ້ເຊົ່າຕູ້ນິລະໄພຊາບ ພາຍໃນເວລາ ສິບຫ້າ ວັນ ພາຍຫຼັງການແຕ່ງຕັ້ງຄະນະ ຫຼື ຜູ້ຊຳລະສະສາງ ເພື່ອຖອນຊັບສິນຂອງຕົນດ້ວຍຕົນເອງ ພາຍໃນເວລາ ສາມສິບ ວັນ ພາຍຫຼັງໄດ້ຮັບແຈ້ງການ;

3. ພາຍໃນເວລາ ເກົ້າສິບ ວັນ ພາຍຫຼັງຄົບກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້, ຄະນະ ຫຼື ຜູ້ຊຳລະສະສາງ ຕ້ອງ:

- ປະຕິເສດທຸກການຂັດຄ້ານ ໃນກໍລະນີທີ່ເຫັນວ່າບໍ່ມີຄວາມຖືກຕ້ອງ ຫຼື ບໍ່ສາມາດໃຊ້ໄດ້ຕາມກົດໝາຍ;
- ກະກຽມແຜນຊຳລະສະສາງ ຊຶ່ງລວມທັງການກຳນົດຈຳນວນໜີ້ຕໍ່ຜູ້ຝາກເງິນ ຫຼື ເຈົ້າໜີ້ອື່ນ ແລະ ບູລິມະສິດໃນການຊຳລະ ພ້ອມທັງຍື່ນແຜນຊຳລະສະສາງຕໍ່ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຮັບຮອງ;
- ພິມເຜີຍແຜ່ແຜນຊຳລະສະສາງລົງໃນໜັງສືພິມ ຫຼື ສື່ສິ່ງພິມຕ່າງໆ;
- ຈັດຕັ້ງປະຕິບັດແຜນການຊຳລະສະສາງ.

**ມາດຕາ 29 ການຂັດຄ້ານ ແລະ ການຮ້ອງຟ້ອງຕໍ່ສານຂອງຜູ້ກ່ຽວຂ້ອງ**

ຜູ້ກ່ຽວຂ້ອງ ເປັນຕົ້ນ ຜູ້ຝາກເງິນ, ເຈົ້າໜີ້ອື່ນ ຫຼື ຜູ້ຖືຮຸ້ນ ແລະ ບຸກຄົນທີ່ກ່ຽວຂ້ອງອື່ນ ສາມາດຍື່ນຄຳຂັດຄ້ານແຜນຊຳລະສະສາງຕໍ່ຄະນະ ຫຼື ຜູ້ຊຳລະສະສາງ ພາຍໃນເວລາ ຊາວ ວັນ ພາຍຫຼັງທີ່ຄະນະ ຫຼື ຜູ້ຊຳລະສະສາງ ໄດ້ພິມເຜີຍແຜ່ແຜນຊຳລະສະສາງ ເປັນຕົ້ນໄປ.

ຜູ້ກ່ຽວຂ້ອງສາມາດຮ້ອງຟ້ອງຕໍ່ສານ ເພື່ອປົກປ້ອງສິດຂອງຕົນ ພາຍໃນເວລາ ສາມສິບ ວັນ ນັບແຕ່ວັນທີ່ຄະນະຊຳລະສະສາງ ເລີ່ມດຳເນີນການຊຳລະສະສາງຕາມແຜນການຊຳລະ, ແຕ່ການດຳເນີນການທາງກົດໝາຍດັ່ງກ່າວບໍ່ສາມາດເປັນເງື່ອນໄຂໃນການຢຸດ ຫຼື ໂຈະການປະຕິບັດໜ້າທີ່ ຂອງຄະນະຊຳລະສະສາງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສະຖາບັນການເງິນ, ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານຂອງສະຖາບັນການເງິນທີ່ຢູ່ໃນພາວະວິກິດ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ປະກາດໃຊ້ກ່ອນໜ້ານີ້ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**




**ສອນໄຊ ສິດພະໄຊ**